# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ
# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 3
## ຂໍ້ກຳນົດສາກົນກ່ຽວກັບການແກ້ໄຂຂໍ້ຂັດແຍ່ງ
## International provisions on dispute resolution

### 1. ອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດສາກົນ

#### 1.1 ສະພາການຄ້າສາກົນ ( ICC )

ສະພາການຄ້າສາກົນ International Chamber of Commerce ( ICC) ແມ່ນອົງການທຸລະກິດສາກົນ, ໃຫ້ການຊ່ວຍເຫຼືອໃນການດຳເນີນທຸລະກິດ ໃຫ້ມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ. ອົງການນີ້ ໄດ້ຮັບການສ້າງຕັ້ງຂຶ້ນພາຍຫຼັງສົງຄາມໂລກຄັ້ງທີ I, ເປັນອົງການສົ່ງເສີມການຄ້າ ລະຫວ່າງປະເທດ ເພື່ອແນໃສ່ເປີດກວ້າງການຄ້າ, ການບໍລິການ ແລະ ການໄຫຼວຽນຂອງທຶນຢ່າງເສລີ ທັງເປັນການປົກປ້ອງ ການຫຸ້ມຕະຫຼາດ. ອົງການ ICC ປະຕິບັດສາມກິດຈະກຳຕົ້ນຕໍ ເຊັ່ນ: ການສ້າງກົດລະບຽບ, ການແກ້ໄຂຂໍ້ຂັດແຍ່ງ ແລະ ການສະໜັບສະໜູນການວາງນະໂຍບາຍການຄ້າ.

ການແກ້ໄຂຂໍ້ຂັດແຍ່ງ ຂອງອົງການ ICC ແມ່ນໜ່ວຍງານທີ່ມີຊື່ວ່າ The International Court of Arbitration, ເປັນອົງການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດທີ່ມີຄວາມເປັນເອກະລາດ ຊຶ່ງເປັນໜ່ວຍງານທີ່ມີສິດ ແລະ ໜ້າທີ່ ຮັບຜິດຊອບບໍລິການ-ການຕັດສິນຂໍ້ຂັດແຍ່ງ. ຮູບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງອົງການນີ້ ແມ່ນນຳໃຊ້ຮູບແບບ ຄື: ການໄກ່ເກ່ຍ ແລະ ການຕັດສິນ ນອກລະບົບສານ. ນອກຈາກນີ້ ຍັງມີພາລະບົດບາດວາງລະບຽບການ ແລະ ໃຫ້ຄວາມຮູ້ກ່ຽວກັບການສ້າງສັນຍາ, ທັກສະການແກ້ໄຂຂໍ້ຂັດແຍ່ງ.

ນັບແຕ່ປີ 2017 ເປັນຕົ້ນມາ ລະບຽບການວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງຂອງ ICC ໄດ້ຖືກນຳໃຊ້ເຂົ້າໃນການແກ້ໄຂຂໍ້ຂັດແຍ່ງທາງການຄ້າໄປທົ່ວໂລກ, ຍ້ອນວ່າໄດ້ມີການກຳນົດລະບຽບການ ທີ່ເປັນເຄື່ອງມືຮອງຮັບການບໍລິການແກ້ໄຂຂໍ້ຂັດແຍ່ງຢູ່ໜ່ວຍງານຕັດສິນ. ນິຕິກຳນີ້ ປະກອບມີ 42 ມາດຕາ [1].

- **ຄຸນລັກສະນະພິເສດ ຂອງ ICC**

  ສະພາການຄ້າໂລກ ມີໜ້າທີ່ພິເສດ [2] ຄື:

  1) ອຳນວຍຄວາມສະດວກໃນການດຳເນີນຄະດີ;

---

[1] https://iccwbo.org/dispute-resolution-services/arbitration/rules-of-arbitration/

[2] https://iccwbo.org/content/uploads/sites/3/2019/08/icc-mediation-flyer.pdf

2) ຄັດເລືອກເອົາຜູ້ໄກ່ເກ່ຍ ໜຶ່ງ ຄົນ ທີ່ມີຄຸນວຸດທິສູງ, ເປັນເອກະລາດ ທີ່ມີຢູ່ສະພາການຄ້ານັ້ນ ໃນທັນໃດ ເພື່ອໄກ່ເກ່ຍຂໍ້ຂັດແຍ່ງ;
3) ກຳນົດຊົ່ວໂມງຂອງຜູ້ໄກ່ເກ່ຍ ແລະ ຄຸ້ມຄອງການເງິນ;
4) ຊີ້ນຳ ການດຳເນີນຄະດີ ແລະ ກຳນົດເວລາຂອງການໄກ່ເກ່ຍ;
5) ໃຫ້ຄຳແນະນຳ ແກ່ທຸກຝ່າຍ ແລະ ຜູ້ໄກ່ເກ່ຍ;
6) ປົກປ້ອງບັນດາຝ່າຍໃນການດຳເນີນຄະດີ ເປັນຕົ້ນ ໃນກໍລະນີ ບໍ່ເຫັນດີກ່ຽວກັບສະຖານທີ່ ຫຼື ພາສາຂອງການດຳເນີນຄະດີ, ຄັດຄ້ານການດຳເນີນຄະດີ, ຂາດການຈ່າຍເງິນຢູ່ໃນຂັ້ນຕອນການດຳເນີນຄະດີ, ການທ້າທາຍ ແລະ / ຫຼື ປ່ຽນແທນຜູ້ໄກ່ເກ່ຍເປັນຕົ້ນ;
7) ICC ໃຫ້ການຊ່ວຍເຫຼືອ ແລະ ຊີ້ຂາດຕໍ່ຂໍ້ຂັດແຍ່ງທີ່ບໍ່ໄດ້ຮັບການແກ້ໄຂ.

### 1.2 ອົງການ United Nation Commission on International Assembly Trade Law (UNCITRAL)

ການພັດທະນາເສດຖະກິດ-ສັງຄົມທີ່ມີການຂະຫຍາຍຕົວຂຶ້ນ ຊຶ່ງໄດ້ຮຽກຮ້ອງໃຫ້ມີລະບົບນິຕິກຳ ແລະ ກົນໄກການຮ່ວມມືທາງດ້ານກົດໝາຍ ເປັນເຄື່ອງມືໃນການຂັບເຄື່ອນການຄ້າສາກົນ ແລະ ການລົງທຶນຂ້າມຊາດ ເພື່ອພັດທະນາຊີວິດການເປັນຢູ່ຂອງມວນມະນຸດໃຫ້ດີຂຶ້ນ. ດັ່ງນັ້ນ, ພາຍຫຼັງສົງຄາມໂລກຄັ້ງທີສອງ ອົງການສະຫະປະຊາຊາດ ເພື່ອການພັດທະນາ ໄດ້ສ້າງຕັ້ງຄະນະກຳມະການກົດໝາຍການຄ້າສາກົນ ຊຶ່ງເອີ້ນຫຍໍ້ຕາມພາສາອັງກິດວ່າ "UNCITRAL".

ຄະນະກຳມະການກົດໝາຍການຄ້າສາກົນນີ້ ມີພາລະບົດບາດພັດທະນາລະບົບກົດໝາຍການຄ້າລະຫວ່າງປະເທດໃຫ້ມີຄວາມທັນສະໄໝ ແລະ ເປັນລະບົບຄົບຊຸດເທື່ອລະກ້າວ ໂດຍສະເພາະແມ່ນການກະກຽມ ແລະ ປະກອບສ່ວນເຂົ້າໃນການສ້າງລະບຽບການ, ນຳໃຊ້ລະບຽບການ ເປັນຂໍກຸນແຈ ໃຫ້ແກ່ການພັດທະນາກົດໝາຍໃນຂົງເຂດການຄ້າ ຊຶ່ງປະກອບດ້ວຍວິທີການແກ້ໄຂຂໍ້ຂັດແຍ່ງທາງການຄ້າ, ການຈັດຕັ້ງປະຕິບັດສັນຍາສາກົນ, ການຂົນສົ່ງ, ການລົ້ມລະລາຍ, ການຄ້າເອເລັກໂຕຼນິກ, ການຊຳລະສະສາງຂ້າມຊາດ, ຄວາມປອດໄພການຄ້າຂ້າມຊາດ, ການຈັດຊື້ສິນຄ້າ ແລະ ອື່ນໆ. ເອກະສານເຫຼົ່ານີ້ ຖືກນຳໃຊ້ເຂົ້າໃນການເຈລະຈາຜ່ານຂະບວນການສາກົນທີ່ກ່ຽວຂ້ອງກັບຫຼາຍພາກສ່ວນ ລວມທັງປະເທດສະມາຊິກ ແລະ ປະເທດທີ່ຍັງບໍ່ເປັນສະມາຊິກ ຂອງຄະນະກຳມະການການຄ້າສາກົນ ແລະ ໄດ້ເຊີນ ອົງການຈັດຕັ້ງສາກົນ (Intergovernmental ), ອົງການຈັດຕັ້ງທີ່ບໍ່ຂຶ້ນກັບລັດຖະບານ ( Non-Governmental Organization ) ເຂົ້າຮ່ວມນຳ. ການເຂົ້າຮ່ວມດັ່ງກ່າວ ໄດ້ເປັນທີ່ຍອມຮັບຢ່າງກວ້າງຂວາງ ຍ້ອນຖືກຮັບຮອງຈາກບັນດາປະເທດ ທີ່ມີກົດໝາຍແຕກຕ່າງກັນວ່າ ເປັນວິທີການແກ້ໄຂບັນຫາທີ່ເໝາະສົມ ຊຶ່ງມີຈຸດ ປະສົງພັດທະນາເສດຖະກິດໃຫ້ຈະເລີນກ້າວໜ້າຮ່ວມກັນ.

ນອກຈາກມີພາລະບົດບາດໃນການ ສ້າງກົດໝາຍແມ່ແບບ (Model Law) ໃຫ້ແກ່ບັນດາປະທດສະມາຊິກ ແລະ ບໍ່ແມ່ນສະມາຊິກ ເພື່ອຫັນລະບົບກົດໝາຍພາຍໃນປະເທດຕ່າງໆ ໃຫ້ສອດຄ່ອງກັບລະບຽບການຄ້າສາກົນ ແລະ ການແກ້ໄຂຂໍ້ຂັດແຍ່ງທາງການຄ້າລະຫວ່າງປະເທດແລ້ວ ຍັງມີພາລະບົດບາດໃນການແກ້ໄຂຂໍ້ຂັດແຍ່ງ ທີ່ຄູ່ຂັດແຍ່ງຍິນດີສະເໜີມາຍັງຄະນະກຳມະການກົດໝາຍການຄ້າສາກົນນີ້ ເປັນຜູ້ແກ້ໄຂ. ດັ່ງນັ້ນ, ອົງການນີ້ ຈຶ່ງໄດ້ກຳນົດລະບຽບການທີ່ເປັນແມ່ແບບ ເພື່ອຮັບໃຊ້ໃຫ້ແກ່ການແກ້ໄຂຂໍ້ຂັດແຍ່ງຄື [3] :

[3] ລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຂອງອົງການ UNCITRAL (ສະບັບດັດແກ້ 1010) ມາດຕາ

1) ໃນເມື່ອຄູ່ສັນຍາທັງສອງຝ່າຍໄດ້ຕົກລົງວ່າ ຖ້າເກີດຂໍ້ຂັດແຍ່ງຂຶ້ນ, ບໍ່ວ່າຈະຢູ່ໃນສັນຍາ ຫຼື ບໍ່ກໍ່ຕາມ, ຕ້ອງໄດ້ສົ່ງໃຫ້ຄະນະກຳມະການຕັດສິນ ຕາມລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການ ຂອງ UNCITRAL. ຂໍ້ຂັດແຍ່ງດັ່ງກ່າວ ຕ້ອງຖືກຕັດສິນ ໂດຍສອດຄ່ອງກັບລະບຽບການດັ່ງກ່າວນີ້ ຊຶ່ງຂໍ້ຕົກລົງດັ່ງກ່າວ ສາມາດດັດແກ້ໄດ້ ຕາມການຕົກລົງຂອງຄູ່ສັນຍາ.

2) ຂໍ້ຕົກລົງກ່ຽວກັບການແກ້ໄຂຂໍ້ຂັດແຍ່ງດ້ວຍຄະນະກຳມະການ ຈະມີຜົນສັກສິດ ຫຼັງຈາກວັນທີ 15 ສິງຫາ 2010 ເປັນຕົ້ນໄປ ເວັ້ນເສຍແຕ່ຄູ່ສັນຍາ ໄດ້ຕົກລົງນຳໃຊ້ລະບຽບການຕັດສິນອື່ນ, ຂໍ້ຕົກລົງກ່ຽວກັບການແກ້ໄຂຂໍ້ຂັດແຍ່ງດ້ວຍຄະນະກຳມະການ ຈະບໍ່ມີຜົນສັກສິດ ຖ້າຫາກໄດ້ເຮັດຂຶ້ນກ່ອນວັນທີ 15 ສິງຫາ 2010.

3) ລະບຽບການດັ່ງກ່າວນີ້ ຕ້ອງຖືກນຳໃຊ້ເຂົ້າໃນການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການ ເວັ້ນເສຍແຕ່ບົດບັນຍັດໃດໜຶ່ງໃນລະບຽບການນັ້ນ ຫາກຂັດກັບກົດໝາຍທີ່ມີຜົນບັງຄັບໃຊ້ຕໍ່ການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການ ທີ່ຄູ່ສັນຍາບໍ່ສາມາດລົບລ້າງໄດ້, ຊຶ່ງກົດໝາຍ ຕ້ອງມີຜົນບັງຄັບໃຊ້ເໜືອກວ່າ. ລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການກົດໝາຍການຄ້າສາກົນ ເປັນພຽງກົດໝາຍແມ່ແບບ ທີ່ກຳນົດເປັນຫຼັກການລວມ ແລະ ວິທີການບາງຢ່າງທີ່ຈຳເປັນ ແນໃສ່ໃຫ້ບັນດາປະເທດຕ່າງໆ ໃນໂລກໄດ້ຖືເປັນບ່ອນອີງ ໃນການສ້າງ ແລະ ປັບປຸງນິຕິກຳພາຍໃນຂອງຕົນໃຫ້ແທດເໝາະກັບວັດທະນະທຳ, ລະດັບການພັດທະນາເສດຖະກິດ -ສັງຄົມຂອງຕົນ ໂດຍສອດຄ່ອງກັບລະບຽບການຂອງ“UNCITRAL”ສະບັບນີ້.

## 1.3 ອົງການ-ການຄ້າໂລກ

### 1.3.1 ການສ້າງຕັ້ງ ແລະ ຂໍ້ຂັດແຍ່ງທີ່ສາມາດນຳໄປແກ້ໄຂຢູ່ WTO

ອົງການ-ການຄ້າໂລກ ພັດທະນາມາຈາກ General Agreement on Tariffs and Trade in 1947 (GATT 1947) ຊຶ່ງແມ່ນຂໍ້ຕົກລົງຂອງຫຼາຍປະເທດ ທີ່ມີຄວາມປາຖະໜາສົ່ງເສີມການຄ້າສາກົນ ດ້ວຍການຫຼຸດ ຜ່ອນອຸປະສັກທາງດ້ານການຄ້າ ເຊັ່ນ: ອັດຕາພາສີ ແລະ ໂກຕ້າ ໂດຍອີງຕາມລະບົບສາລະບານການຄ້າ ເພື່ອຫຼຸດ ຜ່ອນພາສີ ແລະ ອຸປະສັກທາງການຄ້າອື່ນໆ ແລະ ການລົບລ້າງຄວາມມັກສ່ວນຕົວ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດ [4].

ການແກ້ໄຂຂໍ້ຂັດແຍ່ງ ຂອງອົງການ-ການຄ້າໂລກ ເປົ້າໝາຍແມ່ນລະບົບການຄ້າຫຼາຍຝ່າຍ ຍ້ອນວ່າແມ່ນຂໍ້ຕົກລົງຫຼັກໃນການປະກອບສ່ວນເປັນເອກະລັກຂອງ WTO ຕໍ່ຄວາມໝັ້ນຄົງຂອງເສດຖະກິດໂລກ. ຖ້າບໍ່ມີວິທີການແກ້ໄຂຂໍ້ຂັດແຍ່ງ, ບໍ່ມີລະບົບກົດລະບຽບທີ່ມີຜົນສັກສິດເປັນບ່ອນອີງ ຈະບໍ່ມີຜົນບັງຄັບໃຊ້. ດັ່ງນັ້ນ, ຂັ້ນຕອນການດຳເນີນຂອງ WTO ໄດ້ເນັ້ນໜັກ ເຖິງການແກ້ໄຂລະບົບລະບຽບກົດໝາຍ ເພື່ອເຮັດໃຫ້ລະບົບການຄ້າມີຄວາມປອດໄພ ແລະ ສາມາດຄາດເດົາໄດ້. ລະບົບກົດລະບຽບຈຶ່ງຕ້ອງໄດ້ກຳນົດຢ່າງຊັດເຈນ ແລະ ພ້ອມທັງກຳນົດເວລາໃນການດຳເນີນຄະດີໃຫ້ສຳເລັດ ຊຶ່ງລະບຽບການດັ່ງກ່າວນີ້ ແມ່ນຖືກຮ່າງຂຶ້ນໂດຍຄະນະກຳມະການຕັດສິນຂອງອົງການ-ການຄ້າໂລກ ແລະ ຖືກຮັບຮອງ ຫຼື ປະຕິເສດ ໂດຍທຸກປະເທດສະມາຊິກຂອງ WTO. ດ້ວຍເຫດນີ້, ການແກ້ໄຂຂໍ້ຂັດແຍ່ງຂອງອົງການ-ການຄ້າ ຈຶ່ງອີງໃສ່ລະບຽບກົດໝາຍເປັນຫຼັກ [5]. ນອກຈາກນັ້ນ ໜ່ວຍງານແກ້ໄຂຂໍ້ຂັດແຍ່ງ ຂອງອົງການ-ການຄ້າໂລກ (Dispute Settlement Body, DSB) ມີໜ້າທີ່ ເປັນອົງການຫຼັກໃນການແກ້ໄຂຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການວາງນະໂຍບາຍການຄ້າ ຂອງປະເທດສະມາຊິກ ທີ່ເຫັນວ່າ ການວາງນະໂຍບາຍການຄ້າ ຂອງປະເທດສະມາຊິກນັ້ນ ຫາກມີຜົນໃນດ້ານລົບຕໍ່ປະເທດອື່ນ ຫຼື ຫຼາຍປະເທດ.ໝາຍຄວາມວ່າ ການແກ້ໄຂຂໍ້ຂັດແຍ່ງ ແມ່ນເນັ້ນໜັກໄປທາງດ້ານການວາງນະໂຍບາຍສະເພາະ ແຕ່ລັດຖະບານ ແລະ ເຂດເສດຖະກິດພິເສດທີ່ເປັນເອກະລາດ ຊຶ່ງເປັນສະມາຊິກຂອງ

[4] https://en.wikipedia.org/wiki/General_Agreement_on_Tariffs_and_Trade#cite_note-5
[5] https://www.wto.org/english/thewto_e/whatis_e/tif_e/disp1_e.htm

ອົງການການຄ້າໂລກເທົ່ານັ້ນທີ່ສາມາດເຂົ້າຮ່ວມໂດຍກົງໃນການແກ້ໄຂຂໍ້ຂັດແຍ່ງໃນຖານະທີ່ເປັນພາກສ່ວນຂອງຄະດີ ຫຼື ເປັນພາກສ່ວນທີ່ຖືເອົາ UNDERSTANDING ON RULES AND PROCEDURES GOVERNING THE SETTLEMENT OF DISPUTES (USD) ເປັນບ່ອນອີງ.

ຂໍ້ຂັດແຍ່ງທີ່ຈະສາມາດນຳມາແກ້ໄຂຢູ່ອົງການ-ການຄ້າໂລກ ຫຼື DSB ແມ່ນບັນດາຂໍ້ຂັດແຍ່ງທີ່ເກີດຂຶ້ນຈາກການຈັດຕັ້ງປະຕິບັດບັນດາຂໍ້ຕົກລົງ ລຸ່ມນີ້:

1) ຂໍ້ຕົກລົງວ່າດ້ວຍການສ້າງຕັ້ງອົງການ-ການຄ້າໂລກ (Agreement Establishing the World Trade Organization );
2) ຂໍ້ຕົກລົງການຄ້າຫຼາຍຝ່າຍ (Multilateral Trade Agreement); ຊຶ່ງປະກອບມີບັນດາຂໍ້ຕົກລົງລຸ່ມນີ້:
- ຂໍ້ຕົກລົງຫຼາຍຝ່າຍກ່ຽວກັບການຄ້າສິນຄ້າ (Annex 1A: Multilateral Agreements on Trade in Goods);
- ຂໍ້ຕົກລົງທົ່ວໄປກ່ຽວກັບການຄ້າບໍລິການ(Annex 1B: General Agreement on Trade in Services);
- ຂໍ່ຕົກລົງກ່ຽວກັບການຄ້າທີ່ພົວພັນເຖິງຊັບສິນທາງປັນຍາ (Annex 1C: Agreement on Trade-Related Aspects of Intellectual Property Rights);
- ລະບຽບການ ແລະ ແລະ ຂັ້ນຕອນບໍລິຫານການແກ້ໄຂຂໍ້ຂັດແຍ່ງ (Annex 2: Understanding on Rules and Procedures Governing the Settlement of Disputes).

3) ຂໍ້ຕົກລົງສອງຝ່າຍ ທາງດ້ານການຄ້າ (Plurilateral Trade Agreements ). ຊຶ່ງມີບັນດາຂໍ້ຕົກລົງລຸ່ມນີ້:
- ຂໍ້ຕົກລົງກ່ຽວກັບການບິນພົນລະເຮືອນ (Agreement on Trade in Civil Aircraft );
- ຂໍ້ຕົກລົງກ່ຽວກັບການຈັດຊື້ ຂອງລັດຖະບານ (Agreement on Government Procurement);
- ຂໍ້ຕົກລົງຜະລິດຕະພັນຈາກນົມ ລະຫວ່າງປະເທດ (International Dairy Agreement);
- ຂໍ້ຕົກລົງຜະລິດຕະພັນຊີ້ນງົວລະຫວ່າງປະເທດ( International Bovine Meat Agreement).

4) ລະບຽບ ແລະ ຂັ້ນຕອນ ເພີ່ມເຕີມກ່ຽວກັບບັນດາຂໍ້ຕົກລົງຂອງອົງການ-ການຄ້າໂລກ ( SPECIAL OR ADDITIONAL RULES AND PROCEDURES CONTAINED IN THE COVERED AGREEMENTS)
- ຂໍ້ຕົກລົງກ່ຽວກັບມາດຕະການທາງດ້ານການບໍລິໂພກ ແລະ ອຸປະໂພກ (Agreement on the Application of Sanitary and Phytosanitary Measures);
- ຂໍ້ຕົກລົງກ່ຽວກັບ ແຜ່ນແພ ແລະ ເສື້ອຜ້າ (Agreement on Textiles and Clothing);
- ຂໍ້ຕົກລົງກ່ຽວກັບອຸປະສັກທາງດ້ານການຄ້າ (Agreement on Technical Barriers to Trade);
- ຂໍ້ຕົກລົງກ່ຽວກັບການຈັດຕັ້ງປະຕິບັດ ມາດຕາ 6 ຂອງ GATT 1994 ( Agreement on Implementation of Article VI of GATT 1994);
- ຂໍ້ຕົກລົງກ່ຽວກັບການຈັດຕັ້ງປະຕິບັດມາດຕາ 7 ຂອງ GATT 1994 (Agreement on Implementation of Article VII of GATT 1994;
- ມາດຕະການເກື້ອກູນ ແລະ ປ້ອງກັນການລົງທຶນ (Agreement on Subsidies and Countervailing Measures);

- ຂໍ້ຕົກລົງທົ່ວໄປກ່ຽວກັບການຄ້າບໍລິການ ທີ່ກຳນົດໄວ້ໃນ ມາດຕາ 22 ແລະ ມາດຕາ 23 , ເອະກສານຊ້ອນທ້າຍກ່ຽວກັບ ການບໍລິການທາງການເງິນ, ເອກະສານຊ້ອນທ້າຍກ່ຽວກັບ ການບໍລິການເດີນບິນສາກົນGeneral Agreement on Trade in Services XXII:3, XXIII:3 Annex on Financial Services 4 Annex on Air Transport Services;
- ຄຳຕັດສິນກ່ຽວກັບ ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງສຳລັບ ຂໍ້ຕົກລົງທົ່ວໄປກ່ຽວກັບການຄ້າ ບໍລິການ( Decision on Certain Dispute Settlement Procedures for the GATS )

### 1.3.2 ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ ( UNDERSTANDING ON RULES AND PROCEDURES GOVERNING THE SETTLEMENT OF DISPUTES ,DSU)

ຂັ້ນຕອນການແກ້ໄຂຂໍ້ຂັດແຍ່ງ ແມ່ນຖືເອົາ ( UNDERSTANDING ON RULES AND PROCEDURES GOVERNING THE SETTLEMENT OF DISPUTES ,DSU) ເປັນບ່ອນອີງໃນການແກ້ໄຂຂໍ້ຂັດແຍ່ງ ຄື:

1) ຂັ້ນຕອນການປຶກສາຫາລື ຊຶ່ງຖືວ່າເປັນ ເປັນຂັ້ນຄຕອນຂອງການຍື່ນຄຳຮ້ອງຂໍໂດຍຝ່າຍຮ້ອງຂໍ ໃນຂັ້ນຕອນນີ້ ແມ່ນຄວາມຮັບຜິດຊອບໂດຍກົງຂອງ ປະທານອົງການ-ການຄ້າໂລກ ເພື່ອທຳກາເຈລະຈາ ລະໄກ່ເກ່ຍໃຫ້ຄູ່ກໍລະນີສາມາດຕົກລົງກັນໄດ້ ຖືວ່າເປັນຂັ້ນຕອນປຶກສາຫາລື ຊຶ່ງຕ້ອງໃຊ້ເວລາ60ວັນ;
2) ຂັ້ນຕອນການແນະນຳ: ຄະນະກຳມະການ ຈະແນະນຳໃຫ້ແຕ່ລະຝ່າຍ ປະກອບເອກະສານຄືບຖອນ ຊຶ່ງທຸກຢ່າງຕ້ອງເປັນລາຍລັກອັກສອນ ເພື່ອຂໍ້ມູນໃນການພິຈາລະນາ. ໝາຍຄວາມວ່າເຂົ້າສູ່ຂະບວນການ ດຳເນີນການແກ້ໄຂບັນຫາ ຊຶ່ງຈະໃຊ້ເວລາ 45 ວັນ;
3) ຄະນະກຳມະການສົ່ງບົດລາຍງານໄປໃຫ້ຄູ່ກໍລະນີ ໃຊ້ເວລາ 45 ວັນ;
4) ຄະນະກຳມະການສົ່ງບົດລາຍງານໃຫ້ທຸກປະເທດສະມາຊິກ ໃຊ້ເວລາ 3 ເດືອນ;
5) ຖ້າຫາກບໍມີການອຸທອນຈາກຝ່າຍໃດຝ່າຍໜຶ່ງນັ້ນ ບົດລາຍງານນີ້ ຈະຖືກຮັບຮອງເປັນທາງການ ຈາກຄະນະກຳມະການ (Dispute Settlement Body, DSB) ພາຍໃນ 60 ວັນ .ໝາຍຄວາມວ່າ ບົດລາຍງານນີ້ ແມ່ນຄຳຕັດສິນແລ້ວ;
6) ພາຍຫຼັງຄະນະກຳມະການ DSB ອະນຸຍາດໃຫ້ ມີການອຸທອນ ໄດ້ພາຍໃນກຳນົດ 60-90 ວັນ;
7) ຖ້າມີການອຸທອນ ຄະນະກຳມະການ (Penal) ຈະພິຈາລະນາ ພາຍໃນ ກຳນົດເວລາ 30 ວັນ;
8) ຖ້າຫາກພົບຫຼັກຖານ ທີ່ຈະແຈ້ງ ແລະ ເຊື່ອຖືໄດ້ນັ້ນ, ຜູ້ເສັຍຄະດີ ຈະສາມາດສົ່ງເອກະສານ ແລະ ຈຸດຢືນຂອງຕົນ ເພື່ອໃຫ້ຄະນະກຳມະການຮັບຟັງ ແລະ ພິຈາລະນາຄືນ ພາຍໃນ 30 ວັນ;
9) ໃນກໍລະນີ ຜູ້ເສຍຄະດີ ຫາກບໍ່ມີການຕໍ່ວ່າ ຫຼື ໂຕ້ແຍ້ງແຕ່ຢ່າງໃດນັ້ນ ຖືວ່າຄຳຕັດສິນຂອງຄະນະກຳມະການໃຊ້ໄດ້ເດັດຂາດ ແລະ ຝ່າຍເສຍຄະດີຈະຕ້ອງໃຊ້ແທນຄ່າເສັຍຫາຍຕາມການຕັດສິນ ພາຍໃນກຳນົດເວລາ 20 ວັນ ເປັນຕົ້ນໄປ;
10) ຖ້າຫາກຜູ້ເສຍຄະດີ ຫາກບໍ່ປະຕິບັດຕາມກຳນົດເວລາ ຝ່າຍຊະນະຄະດີ ຈະສະເໜີອົງການ-ການຄ້າໂລກລົງໂທດທາງເສດຖະກິດ(impose trade sanctions) ພາຍໃນກຳນົດເວລາ 30 ວັນ.

- **ຂໍ້ຕົກລົງແກ້ໄຂຂໍ້ຂັດແຍ່ງ**

ຂໍ້ຂັດແຍ່ງທີ່ສາມາດນຳໄປແກ້ໄຂຢູ່ DSB ແມ່ນຂໍ້ຂັດແຍ່ງ ທີ່ໄດ້ກຳນົດໄວ້ໃນມາດຕາ 22 ແລະ 23 ໂດຍສັງລວມແລ້ວ ມີເນື້ອໃນຫຍໍ້ຄື:

- ຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ບໍ່ຈັດຕັ້ງປະຕິບັດພັນທະ ຕາມທີ່ໄດ້ກຳນົດໄວ້ໃນການຕົກລົງ ( ຝ່າຍລະເມີດສັນ ຍາ ) (Violation Complaints);
- ການນຳໃຊ້ມາດຕະການຈັດຕັ້ງປະຕິບັດຄຳຕົກລົງຂອງຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ມີປະສິດທິຜົນຕ່ຳ, ຄູ່ສັນຍາທີ່ປະຕິບັດຄຳຕົກລົງ ທີ່ມີປະສິດທິຜົນຕ່ຳບໍ່ໄດ້ລະເມີດລະບຽບການ, (Non-violation Complaints);
- ສະພາບແວດລ້ອມອື່ນໆ ( Situation Complaints ).




**2. ອົງການແກ້ໄຂຂໍ້ຂັດແຍ່**

ອົງການແກ້ໄຂຂໍ້ຂັດແຍ່ງຂອງພາກພື້ນ ແມ່ນອົງການທີ່ສ້າງຕັ້ງຂຶ້ນມາເພື່ອແກ້ໄຂຂໍ້ຂັດແຍ່ງທາງດ້ານການຄ້າຂອງພາກພື້ນທີ່ມີການຮ່ວມມືກັນທາງການຄ້າ ເຊັ່ນ: ອົງການແກ້ໄຂຂໍ້ຂັດແຍ່ງທາງການຄ້າ ອາເມລິກາ ເໜືອ ຊຶ່ງ

ປະກອບດ້ວຍ 3 ປະເທດຄື : ສະຫະລັດອາເມລິກາ, ເມັກຊິໂກ ແລະ ການາດາ ( North American Free Trade Agreement was an agreement signed by Canada, Mexico, and the United States, creating a trilateral trade bloc in North America NAFTA ) [6] , ອົງການແກ້ໄຂຂໍ້ຂັດທາງດ້ານເສດຖະກິດ ຈີນ-ອາຊຽນ ( China-ASEAN ) ແລະ ອົງການອື່ນໆ.

**ຕົວຢ່າງ:** ອາຊຽນ ແລະ ຈີນ ໄດ້ລົງນາມການຕົກລົງດ້ານການລົງທຶນ ເມື່ອວັນທີ 15 ສິງຫາ 2008 ທີ່ກຸງເທບ ປະເທດໄທ ໂດຍມີວັດຖຸປະສົງທີ່ຈະສົ່ງເສີມ ແລະ ກະຕຸ້ນໃຫ້ເກີດການລົງທຶນຫຼາຍຂຶ້ນ. ການຕົກລົງມີຜົນບັງຄັບໃຊ້ ວັນທີ 1 ມີນາ 2010 ເປັນຕົ້ນໄປ ແນໃສ່ສ້າງບັນຍາກາດທີ່ດີໃຫ້ແກ່ການລົງທຶນທັງອາຊຽນ ແລະ ຈີນ ໂດຍການປະຕິບັດທີ່ສະເໝີພາບ ແລະ ເທົ່າທຽມກັນແກ່ນັກລົງທຶນ. ການປະຕິບັດໂດຍປາສະຈາກການຈຳກັດທາງເຊື້ອຊາດ, ການສະແຫວງຫາຜົນປະໂຫຍດ ແລະ ການຊົດເຊີຍຕໍ່ການສູນເສຍຕ່າງໆ. ນອກຈາກນີ້ຍັງມີບົດບັນຍັດທີ່ອະນຸຍາດໃຫ້ໂອນ ແລະ ຄືນກຳໄລ ໃນສະກຸນເງິນ ທີ່ໃຊ້ໄດ້ຢ່າງອິດສະຫຼະ, ລວມທັງບົດບັນຍັດກ່ຽວກັບການຈັດຕັ້ງກົນໄກລະງັບຂໍ້ພິພາດລະຫວ່າງນັກລົງທຶນ ແລະ ລັດຖະບານ ຊຶ່ງຈະເປັນການຊ່ວຍເຫຼືອໃນການໄກ່ເກ່ຍໃຫ້ແກ່ນັກລົງທຶນ.

ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດລະຫວ່າງອາຊຽນ-ຈີນ ແມ່ນຂະບວນການແກ້ໄຂຂໍ້ພິພາດດ້ານເສດຖະກິດ ທີ່ເນັ້ນໜັກໄປໃນທາງການລະເມີດກົດເກນການຄ້າ ແລະ ການລົງທຶນ ເພື່ອຮັກສາໄວ້ຊຶ່ງຄວາມສຳພັນອັນດີລະຫວ່າງບັນດາປະເທດອາຊຽນ-ຈີນ. ສະນັ້ນ, ຂະບວນການແກ້ໄຂຂໍ້ພິພາດດ້ານການຄ້າ ແລະ ການລົງທຶນຂອງອາຊຽນ-ຈີນ ເປັນວິທີການແກ້ໄຂຂໍ້ພິພາດທາງດ້ານການທູດ ຊຶ່ງຖືເປັນຮູບແບບໜຶ່ງຂອງການແກ້ໄຂຂໍ້ພິພາດລະຫວ່າງລັດຖະບານໂດຍສັນຕິວິທີ ໂດຍເປີດໂອກາດໃຫ້ປະເທດຄູ່ກໍລະນີ ຫາວິທີທາງຢຸດຕິຂໍ້ພິພາດນຳກັນ ດ້ວຍການຕົກລົງກັນເອງ. ເຖິງແມ່ນວ່າຈະມີຝ່າຍທີ່ສາມເຂົ້າມາກ່ຽວຂ້ອງໃນບາງກໍລະນີ ແຕ່ກໍເຂົ້າມາມີບົດບາດໃນລັກສະນະທີ່ຊ່ວຍອຳນວຍຄວາມສະດວກໃນດ້ານຕ່າງໆແກ່ຄູ່ຂັດແຍ່ງເທົ່ານັ້ນ ແລະ ບໍ່ມີຜົນຜູກພັນໃຫ້ຄູ່ກໍລະນີຕ້ອງຍອມຮັບ ຫຼື ປະຕິບັດຕາມດັ່ງທີ່ລະບຸໄວ້ໃນບົດບັນຍັດຂອງກົດບັດອາຊຽນ ໝວດທີ 8 ກ່ຽວກັບການລະງັບຂໍ້ພິພາດ ດັ່ງນີ້:

**1). ການປຶກສາຫາລື:** ກົດບັດອາຊຽນໄດ້ກຳນົດວິທີການໃນການປຶກສາຫາລືໃນການຢຸດຕິຂໍ້ພິພາດລະຫວ່າງປະເທດ ໂດຍລະບຸວ່າຈະຕ້ອງພະຍາຍາມລະງັບຂໍ້ພິພາດໂດຍສັນຕິຢ່າງໄວທີ່ສຸດ ຜ່ານທາງການສົນທະນາ, ການປຶກສາຫາລື ແລະ ເຈລະຈາ ຊຶ່ງຖືເປັນຂັ້ນຕອນທຳອິດ ໃນຂະບວນການແກ້ໄຂຂໍ້ຂັດແຍ່ງ, ເປັນການເປີດໂອກາດໃຫ້ຄູ່ຂັດແຍ່ງໄດ້ຕົກລົງກັນເອງ ເພື່ອຫາທາງອອກໃນການແກ້ໄຂບັນຫາທີ່ເກີດຂຶ້ນນຳກັນ. ເຖິງຢ່າງໃດກໍຕາມປະເທດຄູ່ຂັດແຍ່ງສາມາດເລືອກໃຊ້ການລະງັບຂໍ້ພິພາດຂອງກົດບັດສະຫະປະຊາຊາດ ຫຼື ກົດໝາຍລະຫວ່າງປະເທດອື່ນທີ່ຄູ່ຂັດແຍ່ງເປັນພາຄີເພື່ອຢຸດຕິຂໍ້ພິພາດໄດ້.

**2). ການປະນີປະນອມ:** ຕາມກົດບັດອາຊຽນ ຂໍ້ທີ 23 ໄດ້ລະບຸຂັ້ນຕອນກ່ຽວກັບວິທີການລະງັບຂໍ້ພິພາດລະຫວ່າງປະເທດໄວ້ວ່າ: ຄູ່ຂັດແຍ່ງອາດຈະຕົກລົງກັນເມື່ອໃດກໍ່ໄດ້ທີ່ຈະເລືອກໃຊ້ຄົນກາງທີ່ໜ້າເຊື່ອຖື, ການປະນີປະນອມ ຫຼື ການໄກ່ເກ່ຍ ເພື່ອລະງັບຂໍ້ພິພາດ ພາຍໃນໄລຍະເວລາທີ່ຕົກລົງກັນໄດ້ ຊຶ່ງການປະນີປະນອມຂໍ້ພິພາດນັ້ນຖືເປັນວິທີ

---

[6] https://en.wikipedia.org/wiki/North_American_Free_Trade_Agreement

ການ ທີ່ນິ້ມນອນວິທີໜຶ່ງ. ປະເທດຄູ່ຂັດແຍ່ງມີອິດສະຫຼະ ແລະ ເສລີພາບ ທີ່ຈະຕັດສິນໃຈດຳເນີນການ ຫຼື ບໍ່ດຳເນີນຢ່າງໃດໆ ທີ່ເປັນການຢຸດຕິຂໍ້ພິພາດຕາມຂໍ້ສະເໜີຂອງເລຂາທິການອາຊຽນຜູ້ທີ່ເຮັດໜ້າທີ່ເປັນຄະນະກຳມະການປຶກສາຂໍ້ພິພາດ ເພື່ອເປັນທິດທາງໃນການຢຸດຕິຂໍ້ພິພາດດັ່ງກ່າວ ຈຶ່ງບໍ່ເປັນການຜູກມັດຄູ່ຂັດແຍ່ງໃຫ້ປະຕິບັດຕາມກົດໝາຍ ແລະ ເປັນການຮັກສາອຳນາດອະທິປະໄຕໄວ້.

**3). ການເຈລະຈາ:** ການເຈລະຈາຖືເປັນວິທີການລະງັບຂໍ້ພິພາດທີ່ມີມາເປັນເວລາດົນນານແລ້ວ ແລະ ຈັດໄດ້ວ່າເປັນຂັ້ນຕອນທຳອິດຂອງການລະງັບຂໍ້ພິພາດລະຫວ່າງປະເທດ ທີ່ສຳຄັນ ເນື່ອງຈາກວ່າ ການເຈລະຈາໂດຍກົງລະຫວ່າງຄູ່ຂັດແຍ່ງ ຈະເຮັດໃຫ້ຄູ່ຂັດແຍ່ງເຂົ້າໃຈເຖິງບັນຫາທີ່ແທ້ຈິງ ແລະ ອາດສະເໜີວິທີການແກ້ໄຂບັນຫານັ້ນຖືກປະເດັນ. ໝາຍຄວາມວ່າ ປະເທດຄູ່ຂັດແຍ່ງພ້ອມທີ່ຈະລະງັບຂໍ້ພິພາດທີ່ເກີດຂຶ້ນໂດຍວິທີເຈລະຈາ.

ໃນກໍລະນີທີ່ປະເທດຄູ່ຂັດແຍ່ງບໍ່ປະສົງຈະເຈລະຈາກັນ ຫຼື ເຈລະຈາໄປແລ້ວແຕ່ບໍ່ສາມາດຕົກລົງກັນໄດ້ໃນປະເດັນຂໍ້ຂັດແຍ່ງນັ້ນ ເລຂາທິການອາຊຽນຈະເຂົ້າມາມີບົດບາດ ເພື່ອຊ່ວຍໃຫ້ການເຈລະຈາ ຫຼື ການຕົກລົງເປັນໄປໄດ້ງ່າຍຂຶ້ນ ຊຶ່ງຂັ້ນຕອນການໄກ່ເກ່ຍນັ້ນ ເລຂາທິການອາຊຽນ ຈະເຂົ້າມາເຮັດໜ້າທີ່ເປັນຜູ້ໄກ່ເກ່ຍ ແລະ ສະເໜີທິດທາງ ເພື່ອຢຸດຕິຂໍ້ຂັດແຍ່ງ. ຂໍ້ສະເໜີຂອງຜູ້ໄກ່ເກ່ຍດັ່ງກ່າວບໍ່ມີຜົນຜູກມັດປະເທດຄູ່ຂັດແຍ່ງ ເພາະວ່າມີຖານະເປັນພຽງຂໍ້ສະເໜີທິດທາງເທົ່ານັ້ນ.

**4). ການໃຊ້ຄົນກາງທີ່ໜ້າເຊື່ອຖື:** ວິທີການລະງັບຂໍ້ພິພາດໂດຍໃຊ້ຄົນກາງທີ່ໜ້າເຊື່ອຖືນີ້ຖືເປັນການຊັກຊວນໃຫ້ລັດຖະບານຄູ່ຂັດແຍ່ງເຂົ້າມາເຈລະຈາ ເພື່ອລະງັບຂໍ້ພິພາດລະຫວ່າງກັນໂດຍມີເລຂາທິການອາຊຽນເຮັດໜ້າທີ່ເປັນຜູ້ຊັກຊວນ ແລະ ຈັດໃຫ້ມີການເຈລະຈາໃນຖານະເປັນບຸກຄົນທີສາມ ຊຶ່ງຈະບໍ່ເຂົ້າຮ່ວມໃນການເຈລະຈາ ເພື່ອຢຸດຕິຂໍ້ພິພາດ ແຕ່ຈະເຮັດໜ້າທີ່ອຳນວຍຄວາມສະດວກໃນດ້ານຕ່າງໆໃຫ້ແກ່ຄູ່ຂັດແຍ່ງ ໃນລັກສະນະສ້າງແຮງຈູງໃຈ ແລະ ເປັນມິດຕໍ່ກັນ(Good offices) ຊຶ່ງໂດຍທົ່ວໄປແລ້ວ ກົດໝາຍລະຫວ່າງປະເທດຍອມຮັບວ່າວິທີການລະງັບຂໍ້ພິພາດໂດຍການຊັກຊວນຂອງບຸກຄົນທີສາມນີ້ ເປັນສິ່ງທີ່ກະທຳໃນຫຼັກກົດໝາຍລະຫວ່າງປະເທດ ແລະ ບໍ່ຖືວ່າການຊັກຊວນໃຫ້ມີການຈັດເຈລະຈາລະງັບຂໍ້ພິພາດລະຫວ່າງກັນນັ້ນ ເປັນການກະທຳທີ່ບໍ່ເປັນມິດທີ່ຈະນຳໄປສູ່ການຢຸດຕິຂໍ້ຂັດແຍ່ງໄດ້ໂດຍໄວ.

**5). ການແຕ່ງຕັ້ງຄະນະກຳມະການ:** ອາຊຽນ ແລະ ຈີນ ໄດ້ສ້າງຂໍ້ຕົກລົງວ່າດ້ວຍກົນໄກການລະງັບຂໍ້ພິພາດລະຫວ່າງອາຊຽນ - ຈີນ. ຂໍ້ຕົກລົງດັ່ງກ່າວ ມີຜົນບັງຄັບໃຊ້ ນັບແຕ່ວັນທີ 1 ມີນາ 2005 ເປັນຕົ້ນໄປ. ຖ້າຫາກຄູ່ຂັດແຍ່ງບໍ່ສາມາດຕົກລົງກັນໄດ້ ຈະມີການແຕ່ງຕັ້ງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ເພື່ອດຳເນີນການຕັດສິນ ໂດຍຄຳຕັດສິນຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ຖືເປັນການສິ້ນສຸດ ແລະ ມີຜົນຜູກມັດຄູ່ຂັດແຍ່ງ, ແຕ່ຖ້າ ປະເທດຜູ້ຖືກຟ້ອງຫາກບໍ່ປະຕິບັດຂໍ້ສະເໜີ, ຄຳຊີ້ຂາດຂອງຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ອາດມີການຊົດເຊີຍຄ່າເສຍຫາຍ, ຫາກບໍ່ສາມາດຕົກລົງຊົດເຊີຍຄ່າເສຍຫາຍໄດ້ ຄະນະກຳມະການແກ້ໄຂຂໍ້ຂັດແຍ່ງ ອາດກຳນົດລະດັບຂອງການລະງັບສິດທີ່ຈະໄດ້ຮັບຜົນປະໂຫຍດ ຫຼື ຜົນປະໂຫຍດອື່ນໆທີ່ເໝາະສົມ.

## 3. ການແກ້ໄຂຂໍ້ຂັດແຍ່ງຂອງບາງປະເທດ ທີ່ມີລັກສະນະສາກົນ

ມີຫຼາຍປະເທດໄດ້ສ້າງຕັ້ງອົງການແກ້ໄຂຂໍ້ຂັດແຍ່ງຂອງຕົນເອງຂຶ້ນມາ ເພື່ອແກ້ໄຂຂໍ້ຂັດແຍ່ງທາງດ້ານເສດ ຖະກິດພາຍໃນ ແລະ ຂໍ້ຂັດແຍ່ງຈາກພາກພື້ນ ແລະ ສາກົນເຊັ່ນ:

1) ສູນຕັດສິນຂໍ້ ຂັດແຍ່ງທາງດ້ານເສດຖະກິດ ສາກົນສິງກະໂປ (The Singapore International Arbitration Centre) ໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ 1991 ຊຶ່ງເປັນສູນຕັດສິນທີ່ມີຊື່ສຽງໃນອາຊີ;
2) ສູນຕັດສິນຂໍ້ຂັດແຍ່ງທາງດ້ານການຄ້າສາກົນຫວຽດນາມ ( Vietnam International Arbitration Centre);
3) ຄະນະກຳມະການຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ-ການຄ້າ ສາກົນຈີນ (The China International Economic and Trade Arbitration Commission) ໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ 1956;
4) ສູນຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາກົນຮົງກົງ (Hong Kong International Arbitration Centre) ໄດ້ຮັບການສ້າງຕັ້ງຂຶ້ນ ໃນປີ 1985;
5) ສູນຕັດສິນຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສ ເກົາຫຼີ (The Korean Commercial Arbitration Board).

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 52/ສພຊ, ລົງວັນທີ 22/6/2018.
2. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
3. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.
4. https://iccwbo.org/dispute-resolution-services/arbitration/rules-of-arbitration/
5. https://iccwbo.org/content/uploads/sites/3/2019/08/icc-mediation-flyer.pdf
6. ລະບຽບການຕັດສິນຂໍ້ຂັດແຍ່ງດ້ວຍຄະນະກຳມະການຂອງອົງການ UNCITRAL (ສະບັບດັດແກ້ 1010) ມາດຕາ.
7. https://en.wikipedia.org/wiki/General_Agreement_on_Tariffs_and_Trade#cite_note-5
8. https://www.wto.org/english/thewto_e/whatis_e/tif_e/disp1_e.htm
9. https://en.wikipedia.org/wiki/North_American_Free_Trade_Agreement